# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກເລືອກຕັ້ງ:** Bruce Harrell
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** Bruce ເພື່ອ Seattle
**ເວັບໄຊການໂຄສະນາຫາສຽງເລືອກຕັ້ງ:** BruceForSeattle.com
**ຕຳແໜ່ງໃນສະພາເມືອງ:** ເຈົ້າເມືອງ
**ເບີໂທລະສັບຂອງການໂຄສະນາຫາສຽງເລືອກຕັ້ງ:** (206) 486-0377
**ການແນະນຳຕົວຜູ້ລົງສະໝັກເລືອກຕັ້ງ:**

ຂ້າພະເຈົ້າກຳລັງລົງສະໝັກເຂົ້າແຂ່ງຂັນໃນຕຳແໜ່ງເຈົ້າເມືອງເພື່ອເຮັດໃຫ້ Seattle ສາມັກຄີກັນໂດຍຄຳນຶງເຖິງຄຸນຄ່າລວມຂອງໂອກາດຂອງພວກເຮົາ, ການລວມເຂົ້າກັນເປັນໜຶ່ງດຽວ, ແລະ ຄວາມສະເໝີພາບ.
ພວກເຮົາຈະດຳເນີນການພ້ອມກັນຢ່າງກ້າຫານເພື່ອແກ້ໄຂວິກິດສຳລັບຄົນທີ່ບໍ່ມີເຮືອນຢູ່, ນຳພາການຟື້ນຟູເສດຖະກິດທີ່ເຂັ້ມແຂງສຳລັບທຸລະກິດຂະໜາດນ້ອຍ ແລະ ບັນດາຄອບຄົວໃນເມືອງ Seattle, ແລະດຳເນີນການປະຕິຮູບຕຳຫຼວດທີ່ປ່ຽນແປງວັດທະນາທຳຂອງຕຳຫຼວດ, ບໍ່ແມ່ນພຽງແຕ່ການປະຕິບັດບັດເທົ່ານັ້ນ, ເພື່ອເຮັດໃຫ້ແນ່ໃຈວ່າ ຄອບຄົວຂອງພວກເຮົາທັງໝົດມີຄວາມປອດໄພ.

ເຕີບໂຕໃນຊົນຊັ້ນແຮງງານ, ໃນຄອບຄົວສອງຊົນຊາດ, ຂ້າພະເຈົ້າໄດ້ໃຊ້ຊີວິດ ແລະ ເຮັດວຽກຢູ່ໃນເມືອງ Seattle. ຂ້າພະເຈົ້າຮັກເມືອງນີ້—ຜູ້ທີ່ເຮົາເປັນ ແລະ ຜູ້ທີ່ເຮົາສາມາດເປັນໄດ້. ໃນສະພາເມືອງ, ຂ້າພະເຈົ້າເຮັດວຽກເພື່ອແກ້ບັນຫາອຸປະສັກດ້ານກົດໝາຍຕຳຫຼວດ ເຊັ່ນ ຜ່ານກົດໝາຍທີ່ອະຄະຕິຕໍ່ຕຳຫຼວດສະບັບທຳອິດຂອງເມືອງ Seattle ຢ່າງສຳເລັດຜົນ, ແລະ ກົດໝາຍເພື່ອປ້ອງກັນການເລືອກປະຕິບັດໃນສະຖານທີ່ເຮັດວຽກເພື່ອປ້ອງກັນນາຍຈ້າງຖາມເຖິງປະຫວັດອາດຍາຂອງລູກຈ້າງ (ban-the-box) ແລະ ໄດ້ເພີ່ມການສະໜັບສະໜູນສຳລັບເດັກນ້ອຍໃນ BIPOC (ເດັກຜິວດຳ, ຊົນພື້ນເມືອງ ແລະ ຄົນຜິວສີ) ໃນບັນດາໂຮງຮຽນຂອງລັດ.

ຂ້າພະເຈົ້າໄດ້ເປີດຕົວການໂຄສະນາຫາສຽງຂອງຂ້າພະເຈົ້າກັບແຜນການທີ່ສາມາດດຳເນີນການໄດ້ເພື່ອແກ້ໄຂບັນດາບັນຫາຮີບດ່ວນທີ່ສຸດຂອງເມືອງ Seattle ແລະ ຈັດການກັບວິກິດແນວໂນ້ມທົ່ວໄປຂອງສິ່ງຄົນ ຫຼຸດຜ່ອນຄວາມຮຸນແຮງຂອງປືນ, ເສີມຂະຫຍາຍການດູແລສຸຂະພາບສຳລັບຜູ້ຢູ່ອາໄສໃນເມືອງ Seattle ທັງໝົດ, ແລະ ລົງທຶນໃນພື້ນຖານໂຄງສ້າງໃນການເດີນທາງ ແລະ ການຂົນສົ່ງ.

ການໂຄສະນາຫາສຽງທີ່ເປັນຂັ້ນຮາກຖານຂອງພວກເຮົາໄດ້ຮັບການຮັບຮອງຢ່າງພາກພູມໃຈຈາກກຸ່ມພັນທະມິດທີ່ຫຼາກຫຼາຍທີ່ສຸດຂອງຜູ້ລົງສະໝັກເລືອກຕັ້ງເຈົ້າເມືອງຄົນໃດຄົນໜຶ່ງ, ລວມທັງບັນດາຜູ້ນຳຜິວດຳ ແລະ ຊຸມຊົນຊາວອາເມຣິກັນເຊື້ອຍສາຍເອເຊຍ ແລະ ຊາວເກາະປາຊິຟິກ (AAPI), ອາດີດເຈົ້າຄອງລັດ Gary Locke, ອາດີດເຈົ້າເມືອງ Norm Rice, ສະໜັບສະໜູນສຳລັບສິດທິພົນລະເມືອງ ແລະ ການປະຕິຮູບຕຳຫຼວດ, ແລະ ບັນດາເພື່ອນບ້ານໃກ້ຄຽງທົ່ວທັງເມືອງ Seattle.
ຂ້າພະເຈົ້າຮູ້ສຶກເປັນກຽດທີ່ໄດ້ຮັບການສະໜັບສະໜູນຈາກທ່ານ.

ຜູ້ລົງສະໝັກ ເລືອກຕັ້ງນີ້ໄດ້ເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກ:** Lorena González
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** Lorena for Seattle
**ເວັບໄຊການໂຄສະນາຫາສຽງເລືອກຕັ້ງ:** www.Lorenaforseattle.com
**ຕຳແໜ່ງໃນເມືອງ:** ເຈົ້າເມືອງ
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:** 206.651.5668
**ການແນະນຳຕົວຜູ້ລົງສະໝັກ:**

ຂ້າພະເຈົ້າເປັນຄົນອາເມຣິກາຣຸ່ນທຳອິດທີ່ໄດ້ຮັບການລ້ຽງດູໂດຍຊາວນາທີ່ອົບພະຍົບໃນພາກກາງຂອງ Washington. ໃນຂະນະທີ່ເຕີບໃຫຍ່ຂຶ້ນ, Seattle ເປັນຄວາມຝັນຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າກໍອຸທິດຕົນໃຫ້ກັບມັນ ໃນຂະນະທີ່ຂ້າພະເຈົ້າມຸ່ງໝັ້ນເພື່ອສຳເລັດການສຶກສາໃນລະດັບວິທະຍາໄລ, ໄດ້ຮັບປະລິນຍາດ້ານກົດໝາຍຂອງຂ້າພະເຈົ້າຈາກ Seattle U, ກາຍມາເປັນທະນາຍຄວາມດ້ານສິດທິພົນລະເມືອງ ແລະ ເລີ່ມຕົ້ນຄອບຄົວຂອງຂ້າພະເຈົ້າໃນທີ່ນີ້.

ຂ້າພະເຈົ້າຫາສຽງເພື່ອເປັນສະພາເມືອງ ແລະ ເຮັດວຽກເພື່ອນຳປະຊາຊົນມາຢູ່ຮ່ວມກັນ ເພື່ອຍື່ນການລາພັກຂອງຄອບຄົວໂດຍໄດ້ຮັບຄ່າຈ້າງ ແລະ ຂະຫຍາຍສິດຂອງ pre-K ແລະ LGBTQ, ປົກປ້ອງເຫຍື່ອຜູ້ຖືກລະເມີດທາງເພດ, ປະຕິຮູບການເລືອກຕັ້ງ ແລະ ຊ່ວຍເຫຼືອພະນັກງານ ແລະ ທຸລະກິດຂະໜາດນ້ອຍຈາກໄພພິບັດ.

Seattle ເປັນທາງແຍກທີ່ສຳຄັນ ແລະ ຕອນນີ້ກໍແມ່ນເວລາທີ່ຈະດຳເນີນການກ້າວໄປຂ້າງໜ້າຢ່າງກ້າຫານເພື່ອເອົາຊະນະສະຖານະພາບທີ່ເປັນຢູ່ ແລະ ປູທາງໃຫ້ຄວາມຈະເລີນຜາສຸກຂອງສ່ວນລວມທີ່ມີຮ່ວມກັນຂອງ Seattle. Seattle ບ່ອນທີ່ຄວາມຫຼາກຫຼາຍຄືກຳລັງຂອງພວກເຮົາ, ທຸລະກິດທຸກປະເພດສາມາດເຕີບໂຕໄດ້ ແລະວຽກຂອງເຮົາກໍໃຫ້ລາຍໄດ້ເພື່ອການດຳລົງຊີບ. Seattle ທີ່ນຳພາໂລກໃນການປົກປ້ອງດິນຟ້າອາກາດຂອງພວກເຮົາ, ມີການຈັດສັນເຮືອນທີ່ປອດໄພ ແລະ ໃນລາຄາຍ່ອມເຍົາສຳລັບປະຊາຊົນຂອງຕົນ ແລະ ປ່ຽນແປງຄວາມຍຸຕິທຳດ້ານອາຊະຍາກຳ ແລະ ຄວາມປອດໄພຂອງສາທາລະນະ ເພື່ອບັນລຸຕາມການເຄື່ອນໄຫວດ້ານສິດທິພົນລະເມືອງນີ້.

ຜູ້ລົງສະໝັກນີ້ກຳ ລັງເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກເລືອກຕັ້ງ:** Ann Davison
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** ສຳລັບ Ann ແມ່ນຄວາມເປັນເພື່ອນບ້ານ
**ເວບໄຊການໂຄສະນາຫາສຽງເລືອກຕັ້ງ:** https://www.neighborsforann.com/
**ຕຳແໜ່ງໃນເມືອງ:** ໄອຍະການເມືອງ
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:** 206-775-8838
**ການແນະນຳຕົວຜູ້ລົງສະໝັກເລືອກຕັ້ງ:**

ຂ້າພະເຈົ້າກຳລັງລົງສະໝັກເລືອກຕັ້ງສຳລັບໄອຍະການເມືອງ Seattle ເພາະເມືອງຂອງພວກເຮົາຕ້ອງໄກ່ເກ່ຍສິ່ງທີ່ມັນລົ້ມເຫຼວ ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງຄົນທີ່ບອບບາງທີ່ສຸດ ພ້ອມທັງໜ້າທີ່ພື້ນຖານໃນການປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງສາທາລະນະ.

ໃນປີ 2008, ການຍ່າງໄປສຳນັກງານສານໃນໃຈກາງເມືອງເປັນສິ່ງທີ່ປອດໄພ. ໃນເວລາທີ່ຂ້າພະເຈົ້າມີລູກຄົນທີສອງຂອງຂ້າພະເຈົ້າໃນປີ 2011, ຖະໜົນຂອງພວກເຮົາໄດ້ກາຍມາເປັນສະຖານທີ່ງອັນຕະລາຍ. ປັດຈຸບັນນີ້, ພະນັກງານ ແລະ ຄະນະລູກຂຸນສານໄດ້ຮັບແຈ້ງການບໍ່ໃຫ້ໃຊ້ທາງເຂົ້າຫຼັກ ຍ້ອນມັນບໍ່ປອດໄພຫຼາຍ. ສາມາດເວົ້າໃນລັກສະນະດຽວກັນວ່າບໍ່ປອດໄພສຳລັບບໍລິເວນຂ້າງຄຽງຫຼາຍແຫ່ງຂອງພວກເຮົາ.

ລູກຂອງຂ້າພະເຈົ້າເລີ່ມຖາມຄຳຖາມກ່ຽວກັບວ່າ ເປັນຫຍັງປະຊາຊົນຈຶ່ງອາໄສຢູ່ຕາມຖະໜົນຂອງເມືອງ Seattle ໃນສະພາບການທີ່ໄຮ້ຈິດສຳນຶກ, ມີມະນຸດສະທຳໜ້ອຍກວ່າໃນຄ້າຍລີ້ໄພຂອງ UN ເຊິ່ງເປັນບ່ອນທີ່ຂ້າພະເຈົ້າເຮັດວຽກກັບຄົນທີ່ຫຼົບໜີຈາກສົງຄາມກາງເມືອງ. ແມ່ນແຕ່ລູກຂອງພວກເຮົາກໍ່ຮູ້ວ່າ ສິ່ງທີ່ກຳລັງເກີດຂຶ້ນໃນເມືອງຂອງພວກເຮົາບໍ່ຖືກຕ້ອງ.

ຂ້າພະເຈົ້າຈະໃຫ້ຄວາມເປັນຜູ້ນຳທີ່ສົມດຸນ ໂດຍເຮັດໃຫ້ພວກເຮົາສະຫຼາດໃນເລື່ອງອາຊະຍາກຳ: ຄວບຄຸມສະຖານະການ ບໍ່ແມ່ນຕອບໂຕ້. ຂ້າພະເຈົ້າເປັນຜູ້ນຳທີ່ໄດ້ຮັບຄວາມຮ່ວມມືຈາກຫຼາຍຝ່າຍທີ່ນຳມາເຊິ່ງຄວາມເຫັນອົກເຫັນໃຈ, ຊອກຫາຄວາມກ້າວໜ້າ ແລະ ສ້າງຄວາມສຳພັນໃນການເຮັດວຽກພາຍໃນເມືອງ ແລະ ພາກພື້ນຂອງພວກເຮົາ ເພື່ອຟື້ນຟູຄວາມປອດໄພຂອງສາທາລະນະ.

ໂດຍການແກ້ໄຂຕົວເຊື່ອມໂຍງທີ່ສຳຄັນນີ້ໃນດ້ານສຸຂະພາບ ແລະ ຄວາມປອດໄພຂອງສາທາລະນະ, ພວກເຮົາຈຶ່ງເລີ່ມເຫັນການເປັນຢູ່ທີ່ດີຂຶ້ນໃນເມືອງຂອງພວກເຮົາ. ດ້ວຍຄະແນນສຽງຂອງທ່ານ, ພວກເຮົາສາມາດສ້າງເມືອງທີ່ປອດໄພຂຶ້ນ, ມີຄວາມເຫັນອົກເຫັນໃຈຍິ່ງຂຶ້ນສຳລັບທຸກຄົນ.

ຜູ້ລົງສະໝັກເລືອກຕັ້ງນີ້ໄດ້ເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*

Seattle Ethics & Elections Commission

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກເລືອກຕັ້ງ:** Nicole Thomas- Kennedy
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** NTK4Justice
**ເວບໄຊການໂຄສະນາຫາສຽງເລືອກຕັ້ງ:** https://ntk4justice.com/
**ຕຳແໜ່ງໃນເມືອງ:** ໄອຍະການເມືອງ
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:**
**ການແນະນຳຕົວຜູ້ລົງສະໝັກເລືອກຕັ້ງ:**

ເມືອງ Seattle ພ້ອມແລ້ວສຳລັບແຜນການໃໝ່ສຳລັບຄວາມຍຸຕິທຳ ແລະ ຄວາມປອດໄພຂອງສາທາລະນະ; ການສິ້ນສຸດສຳລັບການກໍ່ອາຊະຍາກຳຕໍ່ຄວາມທຸກຍາກ ແລະ ຄວາມພິການ ແລະ ການລົງທຶນໃໝ່ໃນຊຸມຊົນທີ່ມີສຸຂະພາບດີ *ສຳລັບທຸກຄົນ.* ພວກເຮົາຕ້ອງການໄອຍະການເມືອງ ຜູ້ທີ່ເຂົ້າໃຈວ່າ ການລົງໂທດອາຊະຍາກຳລະຫຸໂທດ ພຽງແຕ່ສ້າງຄວາມບໍ່ໝັ້ນຄົງໃຫ້ຄົນທີ່ໄດ້ຮັບຜົນກະທົບທີ່ສຸດຈາກຄວາມບໍ່ເທົ່າທຽມຂອງເມືອງ Seattle. ການລົງໂທດບໍ່ໄດ້ເຮັດໃຫ້ຊຸມຊົນຂອງພວກເຮົາປອດໄພຂຶ້ນ ແລະ ຍິ່ງກວ່ານັ້ນ ເມືອງຍັງໃຊ້ຈ່າຍເງິນຫຼາຍລ້ານໃນແຕ່ລະປີ ເພື່ອຮ້ອງຟ້ອງສະມາຊິກໃນຊຸມຊົນຂອງພວກເຮົາທີ່ບໍ່ມີເຮືອນຢູ່, BIPOC, ທຸກຍາກ ແລະ ພິການ. ມັນເຖິງເວລາສຳລັບການປ່ຽນແປງແລ້ວ.

ພວກເຮົາຕ້ອງການງຫັກລ້ຽວຈາກແບບຈຳລອງ ໃນລັກສະນະຕອບໂຕ້ ແລະ ເປັນການລົງໂທດຈາກທົດສະວັດທີ່ຜ່ານມາ. ແທນທີ່ຈະສິ້ນເປືອງເງິນໃນການຮ້ອງຟ້ອງບຸກຄົນຍ້ອນຄວາມລົ້ມເຫຼວຂອງລະບົບ, ຂ້າພະເຈົ້າຈະໃສ່ໃຈຕໍ່ການດຳເນີນຄະດີທີ່ຈະເຮັດໃຫ້ເມືອງ Seattle ປົກປ້ອງ ແລະ ປັບປຸງສຸຂະພາບ, ຄວາມປອດໄພ, ສະພາບແວດລ້ອມ ແລະ ສະຫວັດດີການໂດຍທົ່ວໄປຂອງປະຊາຊົນ. ຂ້າພະເຈົ້າຈະຕໍ່ສູ້ເພື່ອສິດຂອງຜູ້ເຊົ່າ ແລະ ຜູ້ເຮັດວຽກ, ທີ່ພັກອາໄສໃນລາຄາພໍຊື້ໄດ້ ແລະ ຫັນອອກຈາກການນຳໃຊ້ເຊື້ອເພີງຊາກຫີນ.

ເມືອງ Seattle ຈະປອດໄພຍິ່ງຂຶ້ນ ເມື່ອພວກເຮົາຢຸດສ້າງຄວາມບໍ່ໝັ້ນຄົງຕໍ່ຄົນທີ່ດ້ອຍໂອກາດທີ່ສຸດຂອງພວກເຮົາຜ່ານການກວດລ້າງ ແລະ ການກັກຂັງ. ໃນຖານະໄອຍະການເມືອງ, ຂ້າພະເຈົ້າຈະທຳລາຍມ້າງລະບົບທີ່ພວກເຮົາຮູ້ວ່າໃຊ້ການບໍ່ໄດ້. ພວກເຮົາສາມາດສິ້ນສຸດການກັກຂັງໝູ່ ແລະ ໃນທາງກົງກັນຂ້າມ ພວກເຮົາຈະຈັດຫາສຳລັບຄວາມຕ້ອງການພື້ນຖານຂອງມະນຸດ. ໃນການກະທຳແບບນັ້ນ, ພວກເຮົາຈະສ້າງພື້ນຖານທີ່ສຳຄັນ ເຊິ່ງຈຳເປັນໃນການສ້າງຄວາມເທົ່າທຽມທີ່ຖືກຕ້ອງ ແລະ ຄວາມປອດໄພທີ່ເປັນຈິງສຳລັບທຸກຄົນໃນເມືອງ Seattle.

ຜູ້ລົງສະໝັກເລືອກຕັ້ງນີ້ໄດ້ເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*

Seattle Ethics & Elections Commission

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກເລືອກຕັ້ງ:** Kenneth Wilson
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** Ken ສຳລັບສະພາ 8
**ເວບໄຊການໂຄສະນາຫາສຽງເລືອກຕັ້ງ:** KenForCouncil8.com
**ຕຳແໜ່ງໃນເມືອງ:** ສະພາເມືອງຕຳແໜ່ງ 8
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:** 206-637-4994
**ການແນະນຳຕົວຜູ້ລົງສະໝັກເລືອກຕັ້ງ:**

ສະພາກຳລັງນຳພາໃນທິດທາງທີ່ຜິດ.

ນັກການເມືອງທີ່ດຳລົງຕຳແໜ່ງບໍ່ສາມາດຄົ້ນຫາວິທີແກ້ໄຂສຳລັບການບໍ່ມີເຮືອນຢູ່ທີ່ເພີ່ມຂຶ້ນ, ຖະໜົນ ແລະ ໂຄງສ້າງພື້ນຖານທີ່ລົ້ມເຫຼວ ແລະ ທຸລະກິດທີ່ປິດຕົວລົງ. ຂ້າພະເຈົ້າກຳລັງຮ້ອງຂໍຄະແນນສຽງຂອງທ່ານ ເພື່ອນຳວິທີແກ້ໄຂທີ່ໃຊ້ສາມັນສຳນຶກ ເພື່ອປ່ຽນແທນການຈັດການແບບຜິດໆໃນປັດຈຸບັນ.

ດ້ວຍຄວາມຜິດຫວັງ, ຂ້າພະເຈົ້າເບິ່ງໃຈກາງເມືອງກາຍມາເປັນສະຖານທີ່ຜິດກົດໝາຍ ແລະ ມີການກິນນອນ, ເວລາການຕອບໂຕ້ຜ່ານ 911 ໄດ້ເພີ່ມຂຶ້ນ, ຫົວໜ້າຕຳຫຼວດດີຖືກບັງຄັບໃຫ້ລາອອກ ແລະ West Seattle ຖືກຕັດອອກຈາກເມືອງ ເນື່ອງຈາກການບຳລຸງຮັກສາທີ່ບໍ່ໄດ້ມາດຕະຖານ ແລະ ຂໍ້ຜິດພາດຢ່າງຕໍ່ເນື່ອງໃນການບໍລິຫານໂຄງສ້າງພື້ນຖານທີ່ມີຄ່າ. ຄວາມທ້າທາຍກ່ຽວກັບການບໍ່ມີເຮືອນຢູ່ຂອງພວກເຮົາຍິ່ງຮຸນແຮງຂຶ້ນ ແລະ ບໍ່ໄດ້ຮັບຄວາມຊ່ວຍເຫຼືອ, ໃນຂະນະທີ່ສວນສາທາລະນະ ແລະ ໂຮງຮຽນຖືກເຮັດໃຫ້ກາຍເປັນບ່ອນລີ້ໄພສຳລັບບັນຫາການເສບຕິດຢາ ແລະ ສຸຂະພາບຈິດ. ໃນການພັດທະນາໃໝ່ແຕ່ລະຄັ້ງ, ພວກເຮົາໄດ້ສູນເສຍຮົ່ມໄມ້ທີ່ສຳຄັນ/ຕົ້ນໄມ້ເກົ່າ ພ້ອມກັນນັ້ນ ການເຊົ່າທີ່ພັກອາໄສໃນລາຄາທີ່ພໍຊື້ໄດ້ກໍ່ຖືກທົດແທນດ້ວຍເຮືອນໃນລາຄາທີ່ບໍ່ສາມາດຊື້ໄດ້ໃນສັດສ່ວນຫ້າຕໍ່ໜຶ່ງ ແລະ ສ້າງບັນຫາແກ່ນ້ຳເສຍທີ່ມີຢູ່.

ຂ້າພະເຈົ້າເປັນຜູ້ຢູ່ອາໄສໃນເມືອງ Seattle ມາ 28 ປີ, ພັນລະຍາຂອງຂ້າພະເຈົ້າ ແລະ ລູກສາວທັງສອງເກີດທີ່ນີ້. ຂ້າພະເຈົ້າເປັນວິສະວະກອນໂຄງສ້າງຂົວທີ່ມີໃບອະນຸຍາດ (PE SE) ພ້ອມກັບທຸະກິດວິສະວະກຳຂະໜາດນ້ອຍຂອງຂ້າພະເຈົ້າເອງ ນັບຕັ້ງແຕ່ປີ 2005. ໃນຖານະທີ່ເປັນສະມາຊິກສະພາ ຂອງທ່ານ, ຂ້າພະເຈົ້າອາໄສປະສົບການດ້ານການວິເຄາະ, ວິສະວະກຳ ແລະ 30 ປີໃນໂຄງການຂົນສົ່ງ ແລະ ໂຄງສ້າງພື້ນຖານເປັນຫຼັກ ເພື່ອນຳການຕັດສິນໃຈທີ່ສົມເຫດສົມຜົນ ແລະ ການຕິດຕາມການຄວບຄຸມຄວາມຄືບໜ້າມາສູ່ການດຳເນີນການຂອງສະພາ. ຂ້າພະເຈົ້າມີຄວາມຊ່ຽວຊານທີ່ຈຳເປັນຕ້ອງມີ ເພື່ອຟື້ນຟູເມືອງ Seattle ໃຫ້ເປັນເມືອງທີ່ພວກເຮົາຕ້ອງການ.

ຜູ້ລົງສະໝັກນີ້ບໍ່ໄດ້ກຳລັງເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*

Seattle Ethics & Elections Commission

# ການແນະນຳຜູ້ລົງສະໝັກ



**ຊື່ຂອງຜູ້ລົງສະໝັກເລືອກຕັ້ງ:** Teresa Mosqueda
**ຊື່ຂອງການໂຄສະນາຫາສຽງເລືອກຕັ້ງ:** ປະຊາຊົນສຳລັບ Teresa
**ເວບໄຊຂອງການໂຄສະນາຫາສຽງເລືອກຕັ້ງ:** TeamTeresa.org
**ຕຳແໜ່ງໃນເມືອງ:** ສະພາແຫ່ງເມືອງຊີແອັດໂທ ຕຳແໜ່ງ 8
**ໝາຍເລກໂທລະສັບຂອງການໂຄສະນາຫາສຽງເລືອກຕັ້ງ:**
**ຄຳນຳຂອງຜູ້ລົງສະໝັກເລືອກຕັ້ງ:**

ຂ້າພະເຈົ້າກຳລັງລົງສະໝັກສຳລັບການເລືອກຕັ້ງໃໝ່ ເພາະເມືອງຂອງພວກເຮົາໄດ້ມາເຖິງທາງແຍກແລ້ວ. ພວກເຮົາທີ່ເຮັດວຽກ, ດຳລົງຊີວິດ ແລະ ຢ້ຽມຢາມເມືອງ Seattle ມີຫຼາຍສິ່ງທີ່ຄ້າຍຄືກັນ ຫຼາຍກວ່າທີ່ຂະແໜງການສາທາລະນະໄດ້ພາໃຫ້ພວກເຮົາເຊື່ອ. ໃນລະຫວ່າງເວລາຮັບຕຳແໜ່ງຂອງຂ້າພະເຈົ້າໃນສະພາ, ຂ້າພະເຈົ້າໄດ້ນຳການຮ່ວມມືປະສານງານຈາກຫຼາກຫຼາຍກຸ່ມຄົນເພື່ອອະນຸມັດການປ່ຽນແປງນະໂຍບາຍທີ່ມີປະສິດທິພາບ. ຈາກການອະນຸມັດ ຂໍ້ບັນຍັດສິດຂອງຜູ້ອອກແຮງງານພາຍໃນປະເທດ (Domestic Workers Bill of Rights) ຈົນເຖິງ ແຜນການລາຍຮັບຄວາມກ້າວໜ້າຂອງເມືອງຊີແອັດໂທແບບເລີ່ມຕົ້ນກະໂດດ (JumpStart Seattle Progressive Revenue Plan) ໂດຍນຳພັນທະມິດທີ່ໃຫ້ຄວາມສຳຄັນກັບຄວາມຕ້ອງການຂອງສ່ວນລວມເຊິ່ງບໍ່ເຊື່ອວ່າຈະມາຮ່ວມເຮັດວຽກນຳກັນໄດ້, ພວກເຮົາກຽມພ້ອມເຮັດວຽກໜັກຮ່ວມກັນ ແລະ ສ້າງເມືອງຊີແອັດໂທທີ່ສະທ້ອນເຖິງຄຸນຄ່າທີ່ພວກເຮົາມີຮ່ວມກັນ.

ຂ້າພະເຈົ້າໄດ້ອຸທິດວິຊາຊີບຂອງຂ້າພະເຈົ້າເພື່ອຮັບປະກັນວ່າຈະບໍ່ມີຜູ້ໃດຖືກປະປ່ອຍ ຫຼື ປະຖິ້ມໄວ້ຂ້າງຫຼັງ. ຂ້າພະເຈົ້າຢືນກັບຄອບຄົວເຮັດວຽກ, ແມ່ຍິງ, ປະຊາຊົນທຸກສີຜິວ, ຜູ້ອົບພະຍົກ ແລະ ບຸກຄົນທີ່ມີຄ່າຈ້າງຕ່ຳທີ່ສຸດ ເພື່ອຮັບປະກັນວ່າ ບັນຫາກົດດັນທີ່ສຸດທີ່ເມືອງຂອງພວກເຮົາກຳລັງປະສົບຈະໄດ້ຮັບການແກ້ໄຂ. ດ້ວຍການສະໜັບສະໜູນຢ່າງຕໍ່ເນື່ອງຂອງທ່ານ, ພວກເຮົາສາມາດຊ່ວຍເພື່ອນບ້ານທຸກຄົນຂອງພວກເຮົາໃຫ້ຟື້ນຟູຈາກ COVID ວິກິດການດ້ານສາທາລະນະສຸກ ແລະ ການຖ່ວງງານໃນເສດຖະກິດ, ແກ້ໄຂບັນຫາຂອງຄົນຈອນຈັດ ແລະ ການຈັດສັນເຮືອນໃນລາຄາຖືກ, ສ້າງໂອກາດດ້ານການສຶກສາ ແລະ ການດູແລເບິ່ງແຍງເດັກ, ສ້າງອາຊີບທີ່ມີຄ່າຈ້າງດີ ແລະ ລົງທຶນໃນສຸຂະພາບ, ການຂົນສົ່ງ ແລະ ໂຄງລ່າງຂອງພວກເຮົາ. ຂອບໃຈທີ່ພິຈາລະນາບໍລິຈາກຄູ່ປ໋ອງສົ່ງເສີມປະຊາທິປະໄຕຂອງທ່ານໃຫ້ແກ່ຂ້າພະເຈົ້າ – ເທື່ອລະຄູ່ປ໋ອງ, ເທື່ອລະຄົນ, ໃຫ້ພວກເຮົາສ້າງເມືອງຊີແອັດໂທທີ່ເຂັ້ມແຂງຂຶ້ນ.

*ຜູ້ລົງສະໝັກຄົນນີ້ກຳລັງເຂົ້າຮ່ວມໃນໂຄງການຄູ່ປ໋ອງສົ່ງເສີມປະຊາທິປະໄຕ (Democracy Voucher Program).*

Seattle
Ethics & Elections
Commission

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກ:** Nikkita Oliver (ພວກເຂົາ/ພວກເຂົາ/ຂອງພວກເຂົາ)
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** Nikkita ເພື່ອປະຊາຊົນ
**ເວັບໄຊການໂຄສະນາຫາສຽງເລືອກຕັ້ງ**: www.nikkita4nine.com
**ຕຳແໜ່ງໃນເມືອງ:** ຕຳແໜ່ງ 9 ຂອງສະພາເມືອງ Seattle
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:** (206)712-2778
**ການແນະນຳຜູ້ລົງສະໝັກ:**

**ວິກິດການທີ່ບໍ່ເຄີຍມີມາກ່ອນຮຽກຮ້ອງໃຫ້ມີການຕອບຮັບແບບປ່ຽນແປງ. ວິທີແກ້ໄຂທີ່ປ່ຽນແປງຫຼາຍທີ່ສຸດແມ່ນມາຈາກຜູ້ທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດຈາກວິກິດການທີ່ພວກເຮົາກຳລັງປະເຊີນໜ້າຢູ່.**

ຂ້າພະເຈົ້າເປັນຜູ້ສະໜັບສໜູນ, ເປັນນັກການສຶກສາ, ເປັນສິລະປິນ, ເປັນຜູ້ຈັດກິດຈະກຳເພື່ອຊຸມຊົນ ແລະເປັນທະນາຍຄວາມ. ຂ້າພະເຈົ້າເປັນຜູ້ເຊົ່າ. ຂ້າພະເຈົ້າເຄີຍໄດ້ເຮັດວຽກຜ່ານວິທະຍາໄລ, ໂຮງຮຽນກົດໝາຍ ແລະຮຽນຈົບການສຶກສາ ຂ້າພະເຈົ້າໄດ້ປະສົບກັບຄວາມບໍ່ແນ່ນອນດ້ານທີ່ພັກອາໄສ ແລະ ເຄີຍໄດ້ນອນຢູ່ໃນລົດຂອງຂ້າພະເຈົ້າມາກ່ອນ. ໃນຖານະທີ່ເປັນຜູ້ລອດຊີວິດຈາກຄວາມຮຸນແຮງໃນຄອບຄົວ, ຂ້າພະເຈົ້າຮູ້ວ່າການຢູ່ໃນສະຖານະການຮ້າຍແຮງທີ່ບໍ່ດີເພາະວ່າບໍ່ມີທີ່ພັກອາໄສໃນຣາຄາທີ່ສາມາດຫາຊື້ອຢູ່ໄດ້ ແລະບໍ່ມີໃຜໂທຫາທີ່ສື່ຂໍຄວາມຊ່ວຍເຫລືອໄດ້ ຂ້າພະເຈົ້າເປັນຜູ້ອຳນວຍການບໍລິຫານຂອງໂຮງການທີ່ບໍ່ຫວັງຜົນກຳໄລ ເຊິ່ງເລີ່ມຕົ້ນຈາກການເປັນຜູ້ໃຫ້ບໍລິການວຽກທີ່ສຳຄັນ ໃນຖານະທີ່ເປັນທະນາຍຄວາມຂ້ອຍໄດ້ຊ່ວຍເຫລືອສະໜັບສະໜູນລູກຄວາມ ໂດຍຜ່ານຄະດີການກິດກັນດ້ານການເຂົ້າຮຽນ, ການຂັບໄລ່ອອກຈາກທີ່ຢູ່ ແລະ ຄະດີການກິດກັນເລືອກປະຕິບັດຕ່າງໆ

ຂ້າພະເຈົ້າໄດ້ເປັນສ່ວນໜຶ່ງທີ່ຊ່ວຍສ້າງໂປແກຼມເພື່ອປິ່ນປົວຟື້ນຟູຄວາມຍຸດຕິທຳ(RJ) ໃນເຂດພາກພື້ນຂອງພວກເຮົາ - ເປັນຄວາມຍຸດຕິທຳທີ່ສ້າງສັນ. ຂ້າພະເຈົ້າສືບຕໍ່ເປັນສ່ວນໜຶ່ງຂອງການພັດທະນາຍຸດທະສາດເພື່ອປິ່ນປົວຟື້ນຟູຄວາມຍຸດຕິທຳ (RJ) ໃນ King County ເຊັ່ນ: ເພື່ອຊຸມຊົນໃໝ່ໂດຍແປງທາງເດີນເພື່ອຊຸມຊົນ ແລະສູນຄວາມສຳເລັດຂອງເຍົາວະຊົນ (YAC) ກັບທາງເດີນສິນຈອນແລະພື້ນທີ່ຢູ່ອາໄສຂອງຊຸມຊົນແອັຟຟາຣິກັນ (Community Passageways & Community Land Trust) ສູນຄວາມສຳເລັດຂອງເຍົາວະຊົນ (YAC)ຈະຮ່ວມມືກັບຊອກຫາທີ່ພັກອາໄສຍ່າງເສຣີ ແລະ ການບໍລິການຫາທີ່ຢູ່ລາຄາຖືກສຳລັບຊາວໜຸ່ມສາວໃນ SE Seattle.

ວຽກທີ່ຂ້າພະເຈົ້າເຮັດແມ່ນອີງໃສ່ທັງປະສົບການທີ່ມີຊີວິດ ແລະ ເປັນມືອາຊີບຂອງຂ້ອຍ, ແຕ່ສິ່ງທີ່ສຳຄັນທີ່ສຸດແມ່ນເຮັດໄປແລ້ວ ແລະຖືວ່າສຳຄັນແມ່ນວຽກທີ່ເຮັດກັບຊຸມຊົນທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ.

*ຜູ້ລົງສະໝັກ ເລືອກຕັ້ງນີ້ໄດ້ເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ (Democracy Voucher Program).*

Seattle Ethics & Elections Commission

# ການແນະນຳຜູ້ລົງສະໝັກ



**ຊື່ຜູ້ລົງສະໝັກ:** Sara Nelson
**ຊື່ການໂຄສະນາຫາສຽງເລືອກຕັ້ງ:** Sara for City Council
**ເວັບໄຊການໂຄສະນາຫາສຽງເລືອກຕັ້ງ:** Saraforcitycouncil.com
**ຕຳແໜ່ງໃນເມືອງ:** ຕຳແໜ່ງ 9 ຂອງສະພາເມືອງ Seattle
**ເບີໂທລະສັບການໂຄສະນາຫາສຽງເລືອກຕັ້ງ:** (206) 910-8762
**ການແນະນຳຕົວຜູ້ລົງສະໝັກ:**

Seattle ແມ່ນເມືອງທີ່ອັດສະຈັນ ແລະ ໂຊກດີ. ພວກເຮົາໄດ້ຮັບພອນດ້ວຍຊັບພະຍາກອນທີ່ອັດສະຈັນ ແລະ ເພື່ອນບ້ານທີ່ດູແລກັນ ແລະ ກັນຢ່າງແທ້ຈິງ. ແຕ່ພວກເຮົາກຳລັງປະສົບກັບເວລາທີ່ໂຫດຮ້າຍ ແລະ ເມືອງຂອງພວກເຮົາບໍ່ໄດ້ສົ່ງມອບ - ບໍ່ມີແມ່ນແຕ່ການບໍລິການພື້ນຖານ. ຂ້າພະເຈົ້າກຳລັງຫາສຽງເລືອກຕັ້ງສຳລັບສະພາເມືອງ ເພາະຂ້າພະເຈົ້າຮູ້ວ່າ ພວກເຮົາສາມາດປັບປຸງຊີວິດຂອງປະຊາຊົນໃນ Seattle ໂດຍເຮັດວຽກຮ່ວມກັນເພື່ອຜົນທີ່ສາມາດວັດແທກໄດ້.

ໃນຂະນະທີ່ພວກເຮົາຟື້ນຕົວຈາກໂຄວິດ, ພວກເຮົາຕ້ອງການຜູ້ນຳທີ່ຈະສາມາດນຳເຂດເມືອງຂອງພວກເຮົາໃຫ້ກັບຄືນມາເຂັ້ມແຂງໄດ້ອີກຄັ້ງ. ໃນຖານະຜູ້ຮ່ວມກໍ່ຕັ້ງທຸລະກິດຄອບຄົວຂະໜາດນ້ອຍ, ຂ້າພະເຈົ້າຮູ້ວິທີການສ້າງສ່ວນສຳຄັນຂອງຊຸມຊົນຈາກພື້ນຂຶ້ນໄປ. ທີ່ Fremont Brewing, ພວກເຮົາໃຫ້ສິດແກ່ພະນັກງານຂອງພວກເຮົາ, ມອບໃຫ້ຄືນແກ່ຊຸມຊົນ ແລະ ນຳພາອຸດສາຫະກຳຢ່າງຍືນຍົງ. ອີກຢ່າງ, ພວກເຮົາຜະລິດເບຍໄດ້ເປັນຢ່າງດີ!

ພວກເຮົາໄດ້ເຫັນວາທະກຳຫຼາຍຢ່າງກ່ຽວກັບບັນຫາການໄຮ້ບ້ານ ແລະ ການບໍລິການພື້ນຖານ, ແຕ່ບໍ່ມີຜົນທີ່ພຽງພໍ. ຂ້າພະເຈົ້າເອົາໃຈໃສ່ເພື່ອເຮັດໃຫ້ສິ່ງຕ່າງໆສຳເລັດຢູ່ສະເໝີ. ໃນຖານະທີ່ປຶກສາດ້ານນະໂຍບາຍທີ່ສະພາເມືອງ, ຂ້າພະເຈົ້າຂຽນນິຕິກຳທີ່ຊ່ວຍເຮັດໃຫ້ Seattle ເປັນຜູ້ນຳແຫ່ງຊາດໃນເລື່ອງນະໂຍບາຍສິ່ງແວດລ້ອມ. ໃນຖານະສະມາຊິກສະພາຂອງທ່ານ, ຂ້າພະເຈົ້າຈະສ້ອມແປງຫົນທາງ ແລະ ຂົວຂອງພວກເຮົາ, ຮັກສາສວນສາທາລະນະຂອງພວກເຮົາ, ຫຼຸດຜ່ອນຈຳນວນປະຊາຊົນທີ່ກຳລັງປະສົບກັບບັນຫາການໄຮ້ບ້ານ ແລະ ຟື້ນຟູຄວາມໄວ້ວາງໃຈໃການບໍລິຫານຄວບຄຸມເມືອງອີກຄັ້ງ.

ມັນຮອດເວລາແລ້ວທີ່ເມືອງຂອງພວກເຮົາຈະກັບຄືນສູ່ພື້ນຖານ ແລະ ສົ່ງມອບຕາມທີ່ສັນຍາໄວ້. ລົງຄະແນນສຽງໃຫ້ Sara Nelson ສຳລັບສະພາເມືອງ!

*ຜູ້ລົງສະໝັກນີ້ບໍ່ໄດ້ກຳລັງເຂົ້າຮ່ວມໃນໂຄງການໃບເງິນບໍລິຈາກສົ່ງເສີມປະຊາທິປະໄຕ (Democracy Voucher Program).*